# ກອງປະຊຸມ ຄລຕ ຄັ້ງທີ X
# ໄດ້ຮັບຮອງ 2 ລະບຽບການທີ່ສຳຄັນຂອງວຽກງານຫຼັກຊັບ




**✸ ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ (ຄລຕ) ຄັ້ງທີ X ໄດ້ດຳເນີນຂຶ້ນກ່ອນກອງປະຊຸມສະໄໝສາມັນເທື່ອທີສອງຂອງສະພາແຫ່ງຊາດຊຸດທີ VII ໜຶ່ງວັນ ແລະ ກໍເປັນກອງປະຊຸມຄັ້ງມ້ວນທ້າຍຂອງປີ 2011 ໂດຍພາຍໃຕ້ການເປັນປະທານຂອງທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດ, ປະທານ ຄລຕ, ພ້ອມນີ້ກໍມີບັນດາຮອງປະທານ, ບັນດາຄະນະ ຄລຕ, ຮອງຜູ້ວ່າການ ແລະ ພະນັກງານຂັ້ນສູງຈາກອົງການລັດຖະບານ ແລະ ກະຊວງ-ອົງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນວາລະກອງປະຊຸມ ຄລຕ ຄັ້ງທີ X ນີ້ ໄດ້ມີການສະເໜີບັນດາລະບຽບການທີ່ສຳຄັນຈຳນວນໜຶ່ງ ໂດຍມີຮ່າງຂໍ້ຕົກລົງວ່າດ້ວຍລະບຽບການລາຍງານ, ຮ່າງຂໍ້ຕົກລົງວ່າດ້ວຍລະບຽບການກວດກາໃນວຽກງານຫຼັກຊັບ ເຊິ່ງກອງປະຊຸມໄດ້ເຫັນດີ ແລະ ຮັບຮອງເອົາ 2 ລະບຽບການດັ່ງກ່າວຢ່າງເປັນເອກະສັນ, ຈາກນັ້ນກອງປະຊຸມກໍໄດ້ມີການທົບທວນຄືນຜົນຂອງການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດ

ຫຼັກຊັບໃນໜຶ່ງປີຜ່ານມາ ແລະ ຜ່ານທິດທາງແຜນການປີ 2012, ນອກນີ້ກໍຍັງໄດ້ມີການທົບທວນຄືນການກະກຽມບໍລິສັດຈົດທະບຽນສໍາລັບປີ 2011-2012 ແລະ ຮັບຟັງການປະກອບທຶນຂອງຕະຫຼາດຫຼັກຊັບລາວ.

ກອງປະຊຸມ ຄລຕ ໄດ້ດໍາເນີນໄປດ້ວຍບັນຍາກາດອັນເຄັ່ງຮ້ອນ ແລະ ມີຄວາມຮັບຜິດຊອບສູງ, ບັນດາຄະນະກໍາມະການຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໄດ້ມີການປະກອບຄໍາຄິດເຫັນຢ່າງຕົງໄປຕົງມາເພື່ອເຮັດໃຫ້ແຜນການເຄື່ອນໄຫວໃນຕໍ່ໜ້າບັນລຸໝາກຜົນອັນໜ້າເພິ່ງພໍໃຈ.

ໃນໂອກາດດັ່ງກ່າວ ທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ, ປະທານ ຄລຕ ໄດ້ຢືນຢັນວ່າກອງປະຊຸມ ຄລຕ ໃນຄັ້ງນີ້ບໍ່ພຽງແຕ່ເປັນການສະຫຼຸບຕີລາຄາໝາກຜົນຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄລຕ ຄັ້ງທີ IX ຜ່ານມາເທົ່ານັ້ນ ແຕ່ຫາກຍັງເປັນການສະຫຼຸບຄືນຜົນການຈັດຕັ້ງປະຕິບັດວຽກງານໃນຂະແໜງຫຼັກຊັບປະຈໍາປີ 2011 ພ້ອມທັງກໍານົດທິດທາງຍຸດທະສາດການພັດທະນາວຽກງານດັ່ງກ່າວສໍາລັບປີຕໍ່ໜ້າ, ໃນນີ້ວຽກງານອັນຮີບດ່ວນກໍຄືວຽກງານການສ້າງນິຕິກໍາວ່າດ້ວຍຫຼັກຊັບ ຊຶ່ງພວກເຮົາຈະຕ້ອງໄດ້ສູ້ຊົນບຸກບືນເອົາໃຈໃສ່ຄົ້ນຄວ້າຈັດຕັ້ງຜັນຂະຫຍາຍໃຫ້ປະກົດຜົນເປັນຈິງຢ່າງໜັກແໜ້ນ.